ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ**

ເລກທີ ...37......./ນຍ

ນະຄອນຫຼວງວຽງຈັນ, ວັນທີ ...3.2.2014

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການຮັບຮອງເອົາແຜນງານແຫ່ງຊາດ

## ວ່າດ້ວຍການສະກັດກັ້ນ ແລະ ຕ້ານການຄ້າມະນຸດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ມະຕິຕົກລົງຂອງກອງປະຊຸມລັດຖະບານ ຄັ້ງວັນທີ 22-23 ພະຈິກ 2012.
- ອີງຕາມ ໜັງສືສະເໜີຂອງຮອງປະທານຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ ສະບັບເລກທີ 037/ຄຊຕມ, ລົງວັນທີ 25 ມິຖຸນາ 2012.

**ນາຍົກລັດຖະມົນຕີ ອອກດຳລັດ:**

**ມາດຕາ 1.** ເຫັນດີຮັບຮອງເອົາແຜນງານແຫ່ງຊາດວ່າດ້ວຍການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ແຕ່ປີ 2013 ຫາ 2015.

**ມາດຕາ 2.** ມອບໃຫ້ຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ, ບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນງານແຫ່ງຊາດດັ່ງກ່າວໃຫ້ປະກົດຜົນເປັນຈິງ.

**ມາດຕາ 3.** ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ມີປະສິດທິຜົນ.

**ມາດຕາ 4.** ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**